ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າແຂວງໆວຽງຈັນ

ເລກທີ...03...../ຈຂ.ວຈ

ວຽງຈັນ, ວັນທີ 10.2.2015

# ຄຳສັ່ງ

## ຂອງທ່ານ ເຈົ້າແຂວງໆ ວຽງຈັນ

ກ່ຽວກັບ: ການຈັດຕັ້ງປະຕິບັດ ການປ້ອງກັນ ແລະ ສະກັດກັ້ນການລະບາດ ຂອງພະຍາດໄຂ້ຍຸງລາຍ.

- ເຖິງ: ພະແນກການ, ອົງການ, ກົມກອງ, ຫ້ອງການ, ໂຮງຮຽນ, ໂຮງໝໍ, ໂຮງຈັກ, ໂຮງງານ, ລັດວິສາຫະກິດ ບັນດາເມືອງ, ບ້ານ, ຕະຫຼອດຮອດ ພໍ່ແມ່ ປະຊາຊົນ ທົ່ວແຂວງວຽງຈັນ.

- ອີງຕາມ: ຄຳສັ່ງ ແນະນຳຂອງ ນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ນະຄອນຫຼວງວຽງຈັນ, ວັນທີ 23.1.2015 ວ່າດ້ວຍ ການປ້ອງກັນ ແລະ ສະກັດກັ້ນການລະບາດຂອງພະຍາດໄຂ້ຍຸງລາຍ.
- ອີງຕາມ: ສະພາບການປ່ຽນແປງດິນຟ້າອາກາດ, ເຮັດໃຫ້ສິ່ງແວດລ້ອມເອື້ອອຳນວຍ ໃຫ້ແກ່ການຂະຫຍາຍຂອງຍຸງລາຍ, ບວກໃສ່ ການເຄື່ອນຍ້າຍຂອງປະຊາກອນພາຍໃນ ແລະ ລະຫວ່າງປະເທດໃນພາກພື້ນ ມີການເພີ່ມຂຶ້ນຢ່າງຫຼວງຫລາຍ, ຊຶ່ງເປັນການອຳນວຍຄວາມສະດວກໃຫ້ແກ່ການສັນຈອນຂອງເຊື້ອຈຸລະໂລກ ໄຂ້ຍຸງລາຍທັງ 4 ຊະນິດ, ເປັນສາເຫດໃຫ້ເກີດການລະບາດຂອງພະຍາດໄຂ້ຍຸງລາຍ.
- ອີງຕາມ: ວົງຈອນຂອງການລະບາດໄຂ້ຍຸງລາຍ ທີ່ມັກເກີດຂຶ້ນໃນທຸກໆ 2 ປີ, ຊຶ່ງປີ 2015 ເປັນປີທີ່ຄາດວ່າຈະມີການລະບາດໄຂ້ຍຸງລາຍເປັນບໍລິເວນກວ້າງ.

ເພື່ອສະກັດກັ້ນ ພະຍາດໄຂ້ຍຸງລາຍເກີດ ລະບາດໃຫຍ່ຄື 2013 ທີ່ຜ່ານມາ, ອັນຈະເຮັດໃຫ້ຊີວິດ ແລະ ຊັບສິນຂອງພໍ່ແມ່ປະຊາຊົນ ກໍ່ຄືງົບປະມານຂອງລັດຖືກເສຍຫາຍໃຫຍ່ຫຼວງ ຄືທີ່ຜ່ານມາ.

## ເຈົ້າແຂວງໆ ວຽງຈັນອອກຄຳສັ່ງ:

1. ໃຫ້ພະແນກສາທາລະນະສຸກແຂວງ ຮີບຮ້ອນ ແນະນຳຫ້ອງການສາທາລະນະສຸກເມືອງ, ສຸກສາລາ, ອຳນາດການປົກຄອງບ້ານສ້າງແຜນກຽມຄວາມພ້ອມໃນການປ້ອງກັນ ແລະ ສະກັດກັ້ນການລະບາດແຕ່ຫົວທີ,ຮັບປະກັນໃຫ້ມີການລຸລ່ວງແນະນຳ, ມີການປັບປຸງໜ່ວຍງານວິຊາສະເພາະທີ່ກ່ຽວຂ້ອງດ້ານການກວດກາ ແລະ ຕິດຕາມໜອນນໍ້າ, ໜ່ວຍງານຄວບຄຸມພາຫະນຳເຊື້ອ, ໜ່ວຍງານເຝົ້າລະວັງ ແລະ ຕອບໂຕ້ດ່ວນ, ໜ່ວຍງານປະຊາສຳພັນໜ່ວຍງານປິ່ນປົວຄຸ້ມຄອງ ມີການກຽມພ້ອມ ແຕ່ລະດັບແຂວງ, ສາທາລະນະສຸກເມືອງ ລົງຮອດຂັ້ນບ້ານ ຕິດຕາມສະພາບເປັນປະຈຳນັບແຕ່ໄດ້ຮັບຄຳສັ່ງນີ້ ເປັນຕົ້ນໄປ.ຯ.

2. ໃຫ້ບັນດາເຈົ້າເມືອງ, ຄະນະກຳມະການຕ້ານ ແລະ ຄວບຄຸມພະຍາດຕິດຕໍ່ຂັ້ນແຂວງ, ຊີ້ນຳອຳນາດການປົກຄອງແຕ່ລະຂັ້ນ, ກຸ່ມບ້ານພັດທະນາ, ບ້ານ ໃຫ້ມີການອຳນວຍຄວາມສະດວກ, ປຸກລະດົມພໍ່ແມ່ປະຊາຊົນອະນາໄມເຮືອນຊານບ້ານຊ່ອງ, ທຳລາຍແຫຼ່ງເພາະພັນຂອງຍຸງລາຍ ເພື່ອປ້ອງກັນບໍ່ໃຫ້ມີການລະບາດຂອງ ໄຂ້ຍຸງລາຍເມື່ອສະພາບເກີດຢູ່ ເມືອງໃດ ແລະ ບ້ານໃດກໍ່ໃຫ້ສຸມກຳລັງໃສ່ເພື່ອແກ້ໄຂໃຫ້ທັນ, ບໍ່ປະໃຫ້ການລະບາດແກ່ຍາວຊຶ່ງອາດຈະລາມໄປໃນບໍລິເວນອັນກວ້າງຂວາງ, ໃຫ້ເອົາວຽກປ້ອງກັນໄຂ້ຍຸງລາຍເປັນວຽກໜຶ່ງໃນວຽກງານ ທີ່ສຳຄັນບູລິມະສິດຂອງຄະນະນຳຂອງແຂວງ, ເມືອງ, ມີການປະຊຸມຖອດຖອນບົດຮຽນກະກຽມຄວາມພ້ອມເປັນປະຈຳ

3. ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ ແນະນຳບັນດາໂຮງຮຽນຕ່າງໆ ທົ່ວແຂວງວຽງຈັນສ້າງແຜນປ້ອງກັນໄຂ້ຍຸງລາຍໃນໂຮງຮຽນ ໂດຍສະເພາະ ສ້າງກິດຈະກຳທຳລາຍແຫຼ່ງເພາະພັນຍຸງລາຍພາຍໃນ ໂຮງຮຽນຢ່າງເປັນປະຈຳແຕ່ລະອາທິດ.

4. ໃຫ້ພະແນກຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ ເຜີຍແຜ່ຄວາມຮູ້ໃຫ້ແກ່ປະຊາຊົນຢ່າງທົ່ວເຖິງກ່ຽວກັບການກຳຈັດແຫຼ່ງເພາະພັນຍຸງລາຍຢ່າງເປັນປະຈຳຢູ່ຄຸ້ມບ້ານຕ່າງໆ ທົ່ວແຂວງວຽງຈັນ.

5. ໃຫ້ ກອງບັນຊາການທະຫານ ແຂວງ, ກອງບັນຊາການ ປກສ ແຂວງ, ເອົາໃຈໃສ່ສ້າງແຜນຕ້ານໄຂ້ຍຸງລາຍໃນກົມກອງທີ່ມີກຳລັງທະຫານ, ກຳລັງຕຳຫຼວດອາໃສຢູ່, ໃຫ້ມີຂະບວນການກວດກາໜອນນ້ຳຍຸງລາຍເປັນປະຈຳໃນກົມກອງ.

6. ເມື່ອໄດ້ຮັບຄຳສັ່ງສະບັບນີ້ແລ້ວ ໃຫ້ຮີບຮ້ອນຈັດຕັ້ງຜັນຂະຫຍາຍ ແລະ ເປີດກອງປະຊຸມ ປຶກສາຫາລື ປ້ອງກັນການລະບາດຂອງພະຍາດໄຂ້ຍຸງລາຍຢູ່ແຕ່ລະເມືອງໄດ້ຢ່າງທັນການ.

7. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ ວຽງຈັນ**

ຄຳເມິງ ພົງທະດີ